ທະນາຄານຮ່ວມພັດທະນາ ມະຫາຊົນ

ເລກທີ 195 /ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 09 ທັນວາ 2025

# ມະຕິ
# ກອງປະຊຸມສາມັນຜູ້ຖືຮຸ້ນ
# ທະນາຄານຮ່ວມພັດທະນາ ມະຫາຊົນ ປະຈຳປີ 2024

ກອງປະຊຸມສາມັນຜູ້ຖືຮຸ້ນຂອງທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ປະຈຳປີ 2024 ເຊິ່ງຕໍ່ໄປນີ້ເອີ້ນວ່າ "ກອງປະຊຸມ" ໄດ້ຈັດຂຶ້ນໃນເວລາ 9:00 ໂມງ ຂອງວັນອັງຄານ, ວັນທີ 09 ທັນວາ 2025 ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 6, ທະນາຄານຮ່ວມພັດທະນາ ມະຫາຊົນ, ນະຄອນຫຼວງວຽງຈັນ ໂດຍການເປັນປະທານກອງປະຊຸມຂອງ ທ່ານ ວິໄລ ສີພະພອນ, ປະທານສະພາບໍລິຫານ ທຄຮ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຮ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ: 339 ທ່ານ, ຜູ້ມອບສິດຈຳນວນ: 2 ທ່ານ, ຜູ້ລົງທະບຽນທາງອອນລາຍຈຳນວນ: 300 ທ່ານ ເຊິ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 695,296,100 ຮຸ້ນ, ນັບທັງຈຳນວນຮຸ້ນທີ່ຖືກມອບສິດ 664,546,109 ຮຸ້ນ, ບັນລຸອັດຕາສ່ວນ 92.706% ຂອງຈຳນວນຮຸ້ນ ທຄຮ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຮ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 54,703,900 ຮຸ້ນ ເທົ່າກັບ 7.294% ຂອງຈຳນວນຮຸ້ນ ທຄຮ ທັງໝົດ.

## ກອງປະຊຸມ ໄດ້ພິຈາລະນາ ແລະ ມີມະຕິ ດັ່ງນີ້:

**ວາລະທີ 1: ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນງານ ປະຈຳປີ 2024 ຂອງ ທຄຮ.**
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:
- **ເຫັນດີ**: ຈຳນວນ 695,296,100 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 2: ພິຈາລະນາ ແລະ ຮັບຮອງ ບົດລາຍງານຖານະການເງິນ ປະຈຳປີ 2024 ຂອງ ທຄຮ.**
ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:
- **ເຫັນດີ**: ຈຳນວນ 695,296,100 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 3: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນປັນຜົນ ປີ 2024 ຂອງ ທຄຮ.**
ກອງປະຊຸມພິຈາລະນາ ແລະ ຮັບຮອງການຈັດສັນກຳໄລຫຼັງອາກອນ ປະຈຳປີ 2024 ເພື່ອຈ່າຍເຂົ້າຄັງຕ່າງໆ ຕາມລະບຽບການ ແລະ ຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ດັ່ງນີ້:

- ກຳໄລສຸດທິ ປີ 2024: 741,260,968,798 ກີບ;
- ຫັກເງິນແຮ (ຕາມລະບຽບການ): 74,126,096,880 ກີບ;
- ຈ່າຍເງິນປັນຜົນທັງໝົດ: 660,000,000,000 ກີບ;
- ຄັງຂະຫຍາຍ: 7,134,871,918 ກີບ;
- ຈຳນວນຮຸ້ນທັງໝົດ: 750,000,000 ຮຸ້ນ;



ເລກທີ 82 ຖະໜົນ ລ້ານຊ້າງ ບ້ານຫັດສະດີ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ, 01000, ສປປ ລາວ ໂທ.(+856-21) 213531-6
ສາຍດ່ວນ: 1499, WEBSITE:WWW.JDBBANK.COM.LA; EMAIL:INFO@JDBBANK.COM.LA

- ຈ່າຍເງິນປັນຜົນ: 880 ກີບ/ຮຸ້ນ;
- ມື້ຈ່າຍເງິນປັນຜົນ: 25 ທັນວາ 2025.

ກອງປະຊຸມໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີ**: ຈຳນວນ 695,296,100 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ;
- **ບໍ່ເຫັນດີ**: ຈຳນວນ 0 ສຽງ, ເທົ່າກັບ 0% ຂອງຈຳນວນສຽງທັງໝົດ ທີ່ເຂົ້າຮ່ວມກອງປະຊຸມ.

**ປະທານກອງປະຊຸມ**

ທ່ານ ວິໄລ ສີພະພອນ